ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສະຫະພັນແມ່ຍິງ ທຫລ ສ້າງຂະບວນການຕ້ອນຮັບວັນສ້າງຕັ້ງ ສະຫະພັນແມ່ຍິງລາວ ຄົບຮອບ 65 ປີ



ເພື່ອເຮັດໃຫ້ການສະເຫຼີມສະຫຼອງວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 65 ປີ (20 ກໍລະກົດ 1955 - 20 ກໍລະກົດ 2020) ມີຄວາມໝາຍສຳຄັນເລິກເຊິ່ງ ແລະ ເປັນຂະບວນຟົດຟື້ນ, ໃນຕອນເຊົ້າຂອງວັນທີ 15 ກໍລະກົດ 2020 ຄະນະສະຫະພັນແມ່ຍິງ ທະນາຄານແຫ່ງ ສປປ ລາວ (ທຫລ) ນຳໂດຍທ່ານນາງ ສາຍສະໝອນ ຈັນທະຈັກ ປະທານສະຫະພັນແມ່ຍິງ ທຫລ ພ້ອມດ້ວຍຄະນະສະຫະພັນແມ່ຍິງຈາກບັນດາຮາກຖານທີ່ຂຶ້ນກັບສະຫະພັນແມ່ຍິງ ທຫລ ລວມທັງໝົດ 18 ທ່ານ ທີ່ໄດ້ເປັນຕົວແທນຕາງໜ້າໃຫ້ສະມາຊິກແມ່ຍິງຂອງສະຫະພັນແມ່ຍິງ ທຫລ ທັງໝົດ 1.800 ກວ່າທ່ານ ເຂົ້າຮ່ວມການມອບເຄື່ອງຊ່ວຍເຫຼືອໃຫ້ແກ່ໂຮງຮຽນສຶກສາພິເສດ ທີ່ບ້ານໜອງໜ້ຽວ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ຊຶ່ງເປັນໂຮງຮຽນສິດສອນເດັກນ້ອຍທີ່ມີຄວາມບົກພ່ອງທາງດ້ານການໄດ້ຍິນ (ຫູໜວກ-ປາກກືກ) ແລະ ບົກພ່ອງທາງດ້ານສາຍຕາ (ພິການຕາ). ສຳລັບເຄື່ອງຊ່ວຍເຫຼືອທີ່ນຳໄປມອບປະກອບມີ: ໂຕະຫີນຈຳນວນ 4 ຊຸດ, ເຂົ້າສານ, ອາຫານແຫ້ງ, ເຂົ້າໜົມ-ນົມ ແລະ ເຄື່ອງໃຊ້ປະຈຳວັນທີ່ຈຳເປັນ ລວມມູນຄ່າ 5.000.000 ກີບ. ໃນການມອບ-ຮັບເຄື່ອງຊ່ວຍເຫຼືອຄັ້ງນີ້, ໄດ້ຮັບການຮັບຕ້ອນໂດຍທ່ານ ນ. ສີຣິວັນ ວິຣະຈິດ ຜູ້ອຳນວຍການໂຮງຮຽນ ແລະ ກໍ່ໄດ້ຮັບຟັງການລາຍງານສະພາບຂອງໂຮງຮຽນສຶກສາພິເສດນະຄອນຫຼວງວຽງຈັນ ກ່ຽວກັບຂໍ້ສະດວກ-ຂໍ້ຫຍຸ້ງຍາກໃນການບໍລິຫານໂຮງຮຽນ ແລະ ໃນຕອນທ້າຍໄດ້ຊົມການສະແດງສິລະປະ ແລະ ຮ້ອງເພງເປັນພາສາມືຂອງນ້ອງນັກຮຽນ.

ຜ່ານການຮັບຟັງດັ່ງກ່າວເຮັດໃຫ້ຄະນະສະຫະພັນແມ່ຍິງທະນາຄານແຫ່ງ ສປປ ລາວ ໄດ້ຮັບຮູ້ ແລະ ເຫັນໄດ້ເຖິງຄວາມເປັນຫ່ວງເປັນໄຍຂອງພາກລັດໃນການພະຍາຍາມຊ່ວຍເຫຼືອເດັກນ້ອຍທີ່ມີຄວາມບົກພ່ອງທາງດ້ານການໄດ້ຍິນ ແລະ ສາຍຕາ. ພ້ອມກັນນີ້, ທ່ານ ນ. ສາຍສະໝອນ ຈັນທະຈັກ ປະທານສະຫະພັນແມ່ຍິງທະນາຄານແຫ່ງ ສປປ ລາວ ກໍ່ໄດ້ສະແດງຄວາມດີໃຈທີ່ໄດ້ນຳເຄື່ອງຊ່ວຍເຫຼືອມາມອບໃຫ້ແກ່ໂຮງຮຽນ ແລະ ຍັງຈະສືບຕໍ່ໃຫ້ຄວາມຊ່ວຍເຫຼືອໃນອະນາຄົດຂ້າງໜ້າ.







ໃນຕອນທ້າຍຂອງການມອບເຄື່ອງຊ່ວຍເຫຼືອ, ໂຮງຮຽນສຶກສາພິເສດນະຄອນຫຼວງວຽງຈັນ ໄດ້ມອບໃບຊົມເຊີຍໃຫ້ແກ່ສະຫະພັນແມ່ຍິງທະນາຄານແຫ່ງ ສປປ ລາວ ເພື່ອເປັນການຕອບແທນນໍ້າໃຈທີ່ໄດ້ນໍາວັດຖຸສິ່ງຂອງທີ່ຈໍາເປັນ ແລະ ໄດ້ນໍາໃຊ້ໃນຊີວິດປະຈໍາວັນມາມອບໃຫ້ແກ່ໂຮງຮຽນໃນຄັ້ງນີ້.





**# ຂ່າວ-ພາບ: ວັນປະເສີດ ສົມບູນຂັນ**

# ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນໍາໃຊ້ເງິນກີບ